# ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2017 ແລະ ທິດທາງ, ຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ປີ 2018




ສະເໜີໂດຍ: ທ່ານ ປອ. ກິແກ້ວ ຈັນທະບູຣີ ຮອງລັດຖະມົນຕີ
ກະຊວງແຜນການ ແລະ ການລົງທຶນ

# ໂຄງຮ່າງການນຳສະເໜີ

## 1. ຄາດຄະເນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປີ 2017

- ໝາກຜົນ/ເປົ້າໝາຍໃຫຍ່ 1: ດ້ານເສດຖະກິດ
- ໝາກຜົນ/ເປົ້າໝາຍໃຫຍ່ 2: ດ້ານສັງຄົມ
- ໝາກຜົນ/ເປົ້າໝາຍໃຫຍ່ 3: ດ້ານສິ່ງແວດລ້ອມ
- ວຽກງານຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການ

## 2. ທິດທາງ, ຈຸດສຸມຂອງແຜນພັດທະນາເສດຖະກິດ–ສັງຄົມປີ 2018

# ຄາດຄະເນການຈັດຕັ້ງປະຕິບັດ
# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2017

# ສະພາບລວມ

– ສະພາບເສດຖະກິດຂອງໂລກ ແລະ ພາກພື້ນໂດຍລວມຍັງຂະຫຍາຍຕົວຊັກຊ້າ ແລະ ບໍ່ແນ່ນອນ:

  + ເສດຖະກິດຂອງອາເມລິກາ, ອີຢູ ແລະ ສປຈີນ ຂະຫຍາຍຕົວຕໍ່າກວ່າລະດັບທີ່ຄາດຄະເນໄວ້.

– ສະເພາະເສດຖະກິດຂອງບັນດາປະເທດຕາເວັນອອກສ່ຽງໃຕ້ (ໄທ ແລະ ຫວຽດນາມ) ຊຶ່ງເປັນຄູ່ຄ້າທີ່ສໍາຄັນຂອງລາວຍັງສືບຕໍ່ຂະຫຍາຍຕົວດີຂຶ້ນ

– ສປປລາວ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ,ເສດຖະກິດສືບຕໍ່ຂະຫຍາຍຕົວ, ແລະ ຢູ່ໃນລະດັບດີຖ້າທຽບໃສ່ຫລາຍໆປະເທດໃນພາກພື້ນ. ການດໍາເນີນທຸລະກິດ ແລະ ການຜະລິດຂອງປະຊາຊົນສ່ວນໃຫຍ່ຍັງສືບຕໍ່ດໍາເນີນໄປປົກກະຕິໂດຍພື້ນຖານ.

# ໝາກຜົນ/ເປົ້າໝາຍໃຫຍ່ 1: ດ້ານເສດຖະກິດ

## ເສດຖະກິດຍັງສືບເຕີບໂຕຢ່າງຕໍ່ເນື່ອງໝັ້ນທ່ຽງ ແລະ ເປັນພື້ນຖານທີ່ເຂັ້ມແຂງ ສົມຄວນໃຫ້ແກ່ການພັດທະນາ



# ຂົງເຂດເສດຖະກິດມະຫາພາກ

## ການເຕີບໂຕດ້ານເສດຖະກິດ:

- GDPເພີ່ມຂຶ້ນໃນລະດັບ: 6,83%(ແຜນການ 7%) ຄິດໄລ່ຕາມປີຖານໃໝ່ 2012
- GDP ສະເລ່ຍຕໍ່ຫົວຄົນ: 2.472 USD (ແຜນ 2.341 USD)

| ຂະແໜງການ | ການຂະຫຍາຍຕົວ | | ໂຄງປະກອບ | |
|---|---|---|---|---|
| | ປະຕິບັດ | ແຜນ | ປະຕິບັດ | ແຜນ |
| + ກະສິກຳ | 2,78% | 3,1% | 16,34% | 18,8% |
| + ອຸດສາຫະກຳ | 9,5% | 8,9% | 30,04% | 37,2% |
| + ບໍລິການ | 6,15% | 7,8% | 42,08%, | 34,7% |
| +ພາສີ-ອາກອນຜະລິດຕະພັນ ແລະ ການນຳເຂົ້າ | 6,9% | 5,0% | 11,53%, | 9,3% |

# ຂົງເຂດເສດຖະກິດມະຫາພາກ

| ແຫລ່ງທຶນເພື່ອການພັດທະນາ: | ປະຕິບັດ | ແຜນ |
|---|---|---|
| • ການລົງທຶນທັງໝົດສາມາດປະຕິບັດໄດ້ | 25.330,79 ຕື້ກີບ (69,65% ຂອງແຜນການ) | 36.366 ຕື້ກີບ |
| + ການລົງທຶນພາກລັດ | 1.780,97 ຕື້ກີບ (54% ຂອງແຜນການ) | 2.800 ຕື້ກີບ |
| + ການຊ່ວຍເຫຼືອທາງການເພື່ອການພັດທະນາ | 419,3 ລ້ານໂດລາ ຫຼື 3.518,38 ຕື້ກີບ (40,7% ຂອງແຜນການ ) | 8.629 ຕື້ກີບ |
| + ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ | 1.970,06 ລ້ານໂດລາ ຫຼື 16.530,97 ຕື້ກີບ (ທຶນນຳເຂົ້າຕົວຈິງ) ລື່ນແຜນ 10% | 14.474 ຕື້ກີບ |
| +ຈາກລະບົບສິນເຊື່ອທະນາຄານ | 3.500,4 ຕື້ກີບ (44,8% ຂອງແຜນການ) | 7.800 ຕື້ກີບ |

- **ສະພາບການປັບປຸງບັນຍາກາດການລົງທຶນຂອງພາກເສດຖະກິດ:**

  + ກົດໝາຍສົ່ງເສີມການລົງທຶນ

  + ການຊຸກຍູ້ PPP

  + LBF

  +ການສ້າງກອງທຶນ SMEs

# ດ້ານເສດຖະກິດມະຫາພາກ

| ດ້ານງົບປະມານ | ປະຕິບັດ | ແຜນ |
|---|---|---|
| + ລາຍຮັບ (6ເດືອນຕົ້ນ) | 10.365 ຕື້ກີບ | 23.941 ຕື້ກີບ |
| + ລາຍຈ່າຍ (6ເດືອນຕົ້ນ) | 12.615 ຕື້ກີບ | 32.402 ຕື້ກີບ |
| + ຂາດດຸນງົບປະມານ (6ເດືອນຕົ້ນ) | 2.250 ຕື້ກີບ | < 8.461 ຕື້ກີບ |
| **ເງິນຕາ ແລະ ອັດຕາແລກປ່ຽນ:** | **ປະຕິບັດ** | **ແຜນ** |
| + ອັດຕາເງິນເຟີ້ສະເລ່ຍ | 1,45% | ບໍ່ເກີນ 5% |
| + ອັດຕາແລກປ່ຽນມີການໝັ້ນຄົງເລັກນ້ອຍ<br>- ເງິນກີບອ່ອນຄ່າ (6 ເດືອນຕົ້ນ)<br>- ເງິນກີບອ່ອນຄ່າ (6 ເດືອນຕົ້ນ) | <br>0,66% ທຽບໃສ່ເງິນໂດລາ<br>5,45% ທຽບໃສ່ເງິນບາດ | <br>ແຜນການ±5%<br>ແຜນການ±5% |
| + ຄັງສຳຮອງເງິນຕາຕ່າງປະເທດກຸ້ມມູນຄ່າການນຳເຂົ້າ | 4,14 ເດືອນ | >5ເດືອນ |
| + ປະລິມານເງິນ M2 (6 ເດືອນຕົ້ນ) | 16,39% | < 20% |

# ຂົງເຂດເສດຖະກິດມະຫາພາກ

| ດ້ານຂາອອກ-ຂາເຂົ້າ | ປະຕິບັດ | ແຜນ |
|---|---|---|
| + ການສົ່ງອອກ | 2.378 ລ້ານໂດລາ | 4.459 ລ້ານໂດລາ |
| + ການນຳເຂົ້າ | 2.336 ລ້ານໂດລາ | 4.482 ລ້ານໂດລາ |
| + ດຸນການຄ້າ | +42 ລ້ານໂດລາ (6ເດືອນ) | - 23 ລ້ານໂດລາ |
| **ດ້ານແຮງງານ** | **ປະຕິບັດ** | **ແຜນ** |
| + ພັດທະນາສີມືແຮງງານ | 12.805 ຄົນ | 131.600 ຄົນ |
| + ສະໜອງກຳລັງແຮງງານເຂົ້າສູ່ ຕະຫຼາດພາຍໃນ ແລະ ຕ່າງປະເທດ | 69.352 ຄົນ | 143.230 ຄົນ |

# ຂົງເຂດການຜະລິດ

| | 6 ເດືອນຕົ້ນ | ຄາດຄະເນ ໝົດປີ 2017 | ແຜນປີ2017 |
|---|---|---|---|
| ຜະລິດເຂົ້າ | | 4,27 ລ້ານໂຕນ (98,16%) | 4,35 ລ້ານໂຕນ |
| ການຜະລິດອຸດສະຫາກໍາປຸງແຕ່ງ ແລະ ຫັດຖະກໍາ | 4.463 ຕື້ກີບ | 9.217 ຕື້ກີບ (ລື່ນແຜນ33%) | 6.927 ຕື້ກີບ |
| ມູນຄ່າການຈໍລະຈອນສິນຄ້າ | 25.618 ຕື້ກີບ | 51.687 ຕື້ກີບ (ລື່ນແຜນ 4,5%) | 49.420,75 ຕື້ກີບ |
| ການຜະລິດກະແສໄຟຟ້າ | 13.559 ລ້ານກິໂລວັດໂມງ | 29.052 ລ້ານກິໂລວັດໂມງ | 30.000 ລ້ານກິໂລວັດໂມງ |
| ການຜະລິດແຮ່ທາດ | 5.368,67 ຕື້ກີບ | 10.818,7 ຕື້ກີບ | 15.000 ຕື້ກີບ |
| ຈໍານວນທ່ອງທ່ຽວ | 2,03 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 347 ລ້ານໂດລາ | 4,8 ລ້ານເທື່ອຄົນ, ສ້າງລາຍຮັບໄດ້ 843 ລ້ານໂດລາ | 5,4 ລ້ານເທື່ອຄົນ ສ້າງລາຍຮັບປະມານ 875 ລ້ານໂດລາສະຫະລັດ |

# ໝາກຜົນ/ເປົ້າໝາຍໃຫຍ່ 2: ດ້ານສັງຄົມ

ການພັດທະນາຊັບພະຍາກອນມະນຸດ, ການແກ້ໄຂຄວາມທຸກຍາກ: ການເຂົ້າເຖິງການສຶກສາ ແລະ ບໍລິການ ສາທາລະນະສຸກໄດ້ມີທ່າກ້າວດີຂຶ້ນ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດໄດ້ຮັບການອານຸລັກ ແລະ ເຜີຍແຜ່ຢ່າງກວ້າງໄກ.

# ການພັດທະນາດ້ານສັງຄົມ

| ດັດສະນີໝາຍ LDC (HAI) | ປະຕິບັດ | ແຜນ 2017 |
|---|---|---|
| - ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕົ້ນ | 82,9% | 85% |
| - ອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ | 51,4% | 51% |
| - ອັດຕາການຮູ້ໜັງສືຂອງປະຊາກອນ 15ປີ ຂຶ້ນໄປ | 92,45%(ຕົວເລກການສໍາຫຼວດ Census 2015) | |
| -ອັດຕາການຮູ້ໜັງສືຂອງປະຊາກອນ 15-24ປີ | 84,7% (ຕົວເລກການສໍາຫຼວດ Census 2015) | |
| - ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 5ປີ | 1.160 ຄົນ (ຍັງບໍ່ທັນຄິດໄລ່/1000 ຄົນ) | |

# ການພັດທະນາດ້ານສັງຄົມ (ຕໍ່)

| | ປະຕິບັດ | ແຜນປີ2017 |
|---|---|---|
| **ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ:** | | |
| + ຄອບຄົວທຸກຍາກ | ຫຼຸດລົງ 6.546 ຄອບຄົວ | ຫຼຸດລົງ 5.580 ຄອບຄົວ |
| + ລຶບລ້າງບ້ານທຸກຍາກ | 36 ບ້ານ ເທົ່າກັບ 20,22% ທຽບໃສ່ແຜນປີ | ແຜນການ 178 ບ້ານ |
| + ສ້າງບ້ານພັດທະນາ | 81 ບ້ານ, ລື່ນແຜນ 3,8% | ແຜນການ 78 ບ້ານ |
| **ດ້ານສາທາລະນະສຸກ:** | | |
| + ອັດຕາການຕາຍຂອງແມ່ | 56 ຄົນ (ຍັງບໍ່ທັນຄິດໄລ່ຕໍ່ 100.000ຄົນ) | |
| + ອັດຕາການຊົມໃຊ້ນ້ຳສະອາດຂອງປະຊາຊົນ | 89.3% | 87% |
| + ອັດຕາການນຳໃຊ້ວິດຖ່າຍຂອງຄອບຄົວ | 70,3% | 72% |

# ການພັດທະນາດ້ານສັງຄົມ

| | ຄາດຄະເນ ໝົດປີ 2017 | ແຜນປີ2017 |
|---|---|---|
| **ດ້ານສາທາລະນະສຸກ (ຕໍ່):** | | |
| + ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ | 27% | ຫຼຸດລົງຍັງເຫຼືອ 22% |
| + ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ເຕ້ຍ | 38% | 34% |
| **ດ້ານສຶກສາ:** | | |
| + ອັດຕາການລອດເຫຼືອຂອງນັກຮຽນ ປໍ1-ປໍ5 | 81,1% | ໃຫ້ບັນລຸ 82% |

# ໝາກຜົນ/ເປົ້າໝາຍໃຫຍ່ 3: ດ້ານສິ່ງແວດລ້ອມ

ຊັບພະຍາກອນປ່າໄມ້ ແລະ ການຮັກສາຕົ້ນກຳເນີດຂອງແຫຼ່ງນ້ຳໄດ້ຖືກເອົາໃຈໃສ່ຢ່າງຈິງຈັງ, ການນຳໃຊ້ຊັບພະຍາກອນທຳມະຊາດໄດ້ມີປະສິດທິຜົນສູງຂຶ້ນ, ມີຄວາມພ້ອມກັບການຮັບມືກັບໄພພິບັດດີຂຶ້ນເປັນກ້າວໆ, ຂະບວນການຮ່າງຍຸດທະສາດການເຕີບໂຕສີຂຽວໄດ້ເລີ່ມຕົ້ນ.

# ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

- ການສ້າງຍຸດທະສາດການເຕີບໂຕສີຂຽວ ເລກທີ 0001/ຄຊຕຂ ລົງວັນທີ 19 ເມສາ 2017
- ການປະຕິບັດຄຳສັ່ງເລກທີ 15 ນຍ ວ່າດ້ວຍການຢຸດຕິການຕັດໄມ້
- ຈັດສັນ ແລະ ຄຸ້ມຄອງປ່າຜະລິດແບບຍືນຍົງໃນທົ່ວປະເທດໄດ້ຈຳນວນ 51 ເຂດ, ເນື້ອທີ່ 3,1 ລ້ານເຮັກຕາ, ແບ່ງອອກເປັນ 112 ເຂດຄຸ້ມຄອງ ແລະ 330 ເຂດຄຸ້ມຄອງຍ່ອຍ
- ສົ່ງເສີມການປູກໄມ້ໄດ້ 3.640 ເຮັກຕາ, ເທົ່າກັບ 33% ຂອງແຜນການ(11.000 ເຮັກຕາ),
- ການອອກໃບຕາດິນໃນຂອບເຂດທົ່ວປະເທດ 47.450 ຕອນ, ເທົ່າ 55,8% ຂອງແຜນການ (ແຜນການ 85.000 ຕອນ)
- ສຳເລັດການປັບປຸງ 18 ສະຖານີອຸຕຸນິຍົມໃນຂອບເຂດທົ່ວປະເທດ ແລະ 8 ສະຖານີອຸທົກກະສາດ
- ສຳເລັດການວິເຄາະຂໍ້ມູນກ່ຽວກັບການສ້າງແຜນທີ່ ເຂດທີ່ມີຄວາມສ່ຽງຕໍ່ໄພພິບັດ ແລະ ເຂດທີ່ມີຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ.

# ເປົ້າໝາຍຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ

# ວຽກຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ

- ໄດ້ຄົ້ນຄວ້າປັບປຸງ ແລະ ສ້າງນິຕິກຳ ທີ່ເປັນພື້ນຖານຈຳນວນໜຶ່ງ ເພື່ອຄຸ້ມຄອງວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ເປັນຕົ້ນ: ສ້າງກົດໝາຍ 4 ສະບັບ, ດຳລັດ 5 ສະບັບ, ຂໍ້ຕົກລົງ 10 ສະບັບ.
- ໄດ້ຄົ້ນຄວ້າ ແລະ ພັດທະນາ, ຖ່າຍທອດ ແລະ ດັດປັບນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ເໝາະສົມ, ສົ່ງເສີມຫົວຄິດປະດິດສ້າງ ແລະ ນະວັດຕະກຳໃໝ່ເຂົ້າໃນການຜະລິດ
- ຝຶກອົບຮົມວິຊາຊີບໃຫ້ແກ່ກຸ່ມແມ່ຍິງ, ຊາວໜຸ່ມ ຜູ້ທຸກຍາກ ແລະ ດ້ອຍໂອກາດ

# ເປົ້າໝາຍຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ

- ໄດ້ຈັດຕັ້ງສ້າງຂະບວນການປູກຈິດສໍານຶກການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ໄດ້ເອົາໃຈໃສ່ໂຄສະນາວຽກງານຊາວໜຸ່ມ-ເຢົາວະຊົນຜ່ານສື່ຕ່າງໆ ເປັນຕົ້ນ ລາຍການວິທະຍຸກະຈາຍສຽງຊາວໜຸ່ມລາວສົນໄຊຍຸກໃໝ່ໜັງສືພິມໜຸ່ມລາວ ແລະ ວາລະສານ.
- ຈັດຝຶກອົບຮົມວຽກງານການປົກຄອງຂັ້ນຮາກຖານ ແລະ ວຽກງານການບໍລິການຜ່ານປະຕູດຽວໃຫ້ແກ່ພະນັກງານຂະແໜງການພາຍໃນຢູ່ທ້ອງຖິ່ນ (ຢູ່ ແຂວງອຸດົມໄຊ, ຫົວພັນ, ຊຽງຂວາງ, ຫຼວງພະບາງ ແລະ ແຂວງໄຊຍະບູລີ)

# ຈຸດອ່ອນ ແລະ ຂໍ້ຄົງຄ້າງ

- ເສດຖະກິດມະຫາພາກຍັງບໍ່ທັນມີສະຖຽນລະພາບໜັກແໜ້ນ, ງົບປະມານແຫ່ງລັດຍັງຂາດສະພາບຄ່ອງ,ການຂາດດຸນທຽບໃສ່ GDP ຍັງສູງ, ອັດຕາແລກປ່ຽນຍັງບໍ່ໝັ້ນທ່ຽງ, ການປະຕິບັດນະໂຍບາຍການເງິນ-ເງິນຕາ ຍັງບໍ່ທັນມີປະສິດທິຜົນສູງເທົ່າທີ່ຄວນ.
- ການຄຸ້ມຄອງການນຳເຂົ້າ-ສົ່ງອອກ ແລະ ການຄຸ້ມຄອງສິນຄ້າ ແລະ ລາຄາ(ສິນຄ້າທີ່ມີຜົນກະທົບໂດຍກົງຕໍ່ການດຳລົງຊີວິດຂອງປະຊາຊົນ) ຍັງບໍ່ເຂັ້ມແຂງ ແລະ ຮັດກຸມເທົ່າທີ່ຄວນ
- ການຜະລິດສິນຄ້າຢູ່ໃນຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນໄດ້ຮັບການຊຸກຍູ້ສົ່ງເສີມຢ່າງແຂງແຮງ, ຕົວແບບທີ່ພົ້ນເດັ່ນກໍ່ຍັງບໍ່ທັນມີຫຼາຍ, ເຖິງວ່າມີບາງບ່ອນມີ, ແຕ່ປະລິມານ ແລະ ຄຸນນະພາບຍັງຕໍ່າ.
- ການປັບປຸງສະພາບເອື້ອອຳນວຍແກ່ພາກທຸລະກິດຍັງມີຫຼາຍຂອດຂັ້ນຈະຕ້ອງໄດ້ຮັບການແກ້ໄຂ
- ການເຂົ້າເຖິງເງິນກູ້ຂອງ SMEs ຈະຕ້ອງໄດ້ເພີ່ມທະວີຂຶ້ນຕື່ມ

# ທິດທາງ, ຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2018

# ສະພາບຈຸດພິເສດຂອງແຜນປີ 2018

1) ການປະເມີນກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII (2016-2020), ຄາດຄະເນການເຊື່ອມສານການເຕີບໂຕສີຂຽວເຂົ້າໃສ່ເຄິ່ງສະໄໝຂອງແຜນ VIII
2) ການປະເມີນເງື່ອນໄຂການຫຼຸດພົ້ນອອກຈາກ LDC ໃນປີ 2020 (GNI, HAI, EVI)
3) ການນຳສະເໜີການຈັດຕັ້ງປະຕິບັດວາລະ 2030 (SDGs) ຂອງ ສປປລາວ
4) ການສົ່ງເສີມປີທ່ອງທ່ຽວ 2018

# ທິດທາງ, ຈຸດສຸມຂອງແຜນພັດທະນາ ເສດຖະກິດ-ສັງຄົມ ປີ 2018

1. ສືບຕໍ່ຮັກສາສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບ ຮຽບຮ້ອຍໃນສັງຄົມ
2. ຮັກສາສະຖຽນລະພາບຂອງເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງ ແລະ ເຂັ້ມແຂງ ແລະ ຍືນຍົງ.
3. ສຸມໃສ່ພັດທະນາການສຶກສາ ແລະ ສາທາລະນະສຸກໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ, ຍົກສູງຄຸນນະພາບ ແລະ ພັດທະນາສີມືແຮງງານ, ພັດທະນາວັດທະນະທຳ-ສັງຄົມ.
4. ຈັດຕັ້ງການສົ່ງເສີມປີທ່ອງທ່ຽວ ໃນປີ 2018 ເປັນວາລະສຳຄັນຂອງຊາດ ແລະ ເປັນກຳລັງສຳຄັນຂອງການກະຕຸ້ນເສດຖະກິດ
5. ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຕິດພັນກັບວຽກງານ 3 ສ້າງ

# ທິດທາງ, ຈຸດສຸມຂອງແຜນພັດທະນາ ເສດຖະກິດ-ສັງຄົມ ປີ 2018

6. ສົ່ງເສີມການຜະລິດເປັນສິນຄ້າ ແລະ ການສົ່ງອອກດ້ວຍນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດຢ່າງແຂງແຮງໂດຍສະເພາະສຸມໃສ່ສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ (SMEs)
7. ປັບປຸງກົນໄກການຄຸ້ມຄອງລັດດ້ວຍກົດໝາຍໃຫ້ມີຄວາມສັກສິດໃຫ້ມີຄວາມເຂັ້ມແຂງໃນທຸກຂະແໜງການ ແລະ ທ້ອງຖິ່ນ
8. ປັບປຸງກົງຈັກການຈັດຕັ້ງດ້ວຍການຍົກສູງປະສິດທິພາບການຄຸ້ມຄອງ ແລະ ບໍລິຫານລັດທັງສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງຕາມທິດກະທັດຮັດ, ໂປ່ງໃສ ແລະ ຍຸຕິທຳ
9. ປົກປັກຮັກສາສິ່ງແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິຜົນແບບຍືນຍົງ
10. ປະຕິບັດນະໂຍບາຍການຕ່າງປະເທດສະເໝີຕົ້ນສະເໝີປາຍເປັນເຈົ້າການໃນການຮ່ວມມືກັບພາກພື້ນ ແລະ ສາກົນ.

# ຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມ ປີ 2018

# ດ້ານເສດຖະກິດມະຫາພາກ

| ດ້ານເສດຖະກິດ | ຄາດໝາຍສູ້ຊົນ | |
|---|---|---|
| ການເຕີບໂຕຂອງ GDP | 7% | |
| ມູນຄ່າ GDP | 149.471 ຕື້ກີບ | |
| GDP ຕໍ່ຫົວຄົນ | 2,536 USD | |
| ກະສິກຳ | ເພີ່ມຂຶ້ນ 2,8% | ກວມ 15,73% ຂອງ GDP |
| ອຸດສະຫະກຳ | ເພີ່ມຂຶ້ນ 9,1% | ກວມ 30,79% ຂອງ GDP |
| ບໍລິການ | ເພີ່ມຂຶ້ນ 6,4% | ກວມ 41,83% ຂອງ GDP |
| ພາສີ-ອາກອນຜະລິດຕະພັນ ແລະ ການນຳເຂົ້າ | ເພີ່ມຂຶ້ນ 9,0% | ກວມ 11,65% ຂອງ GDP |

# ດ້ານເສດຖະກິດມະຫາພາກ

| ແຫລ່ງທຶນເພື່ອການພັດທະນາ | ຄາດໝາຍ | %ທຽບໃສ່ການລົງທຶນທັງໝົດ | % ທຽບໃສ່ GDP |
|---|---|---|---|
| • ການລົງທຶນລວມ | 42.145 ຕື້ກີບ | | 28,20 % |
| + ການລົງທຶນງົບປະມານພາຍໃນ<br>- ທຶນບ້ວງປົກກະຕິ<br>- ຈົດຮັບ-ຈົດຈ່າຍ ແລະ ອື່ນໆ | 4.600 ຕື້ກີບ<br>2.800 ຕື້ກີບ<br>1.800 ຕື້ກີບ | 10,91% | 3,07% |
| + ການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) | 8,052 ຕື້ກີບ | 19,11%. | 5,38% |
| + ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ FDI | 20,730 ຕື້ກີບ | 49,18%. | 13,86% |
| + ການລົງທຶນຈາກລະບົບເງິນຕາ | 8.763 ຕື້ກີບ | 20,80% | 5,86% |

# ດ້ານເສດຖະກິດມະຫາພາກ

| ດ້ານງົບປະມານ | ຄາດໝາຍສູຊິນ |
|---|---|
| • ລາຍຮັບ | 25.452 ຕື້ກີບ |
| • ໃນນີ້: ລາຍຮັບພາຍໃນ | ໃຫ້ໄດ້ 22.700 ຕື້ກີບ |
| • ລາຍຈ່າຍ | ບໍ່ໃຫ້ເກີນ 32.809 ຕື້ກີບ |
| • ການຂາດດຸນລວມ | ບໍ່ໃຫ້ເກີນ 7.357 ຕື້ກີບ ເທົ່າກັບ 4,92% ຂອງ GDP |
| | |

# ດ້ານເສດຖະກິດມະຫາພາກ

| **ດ້ານເງິນຕາ ແລະ ອັດຕາແລກປ່ຽນ:** | **ຄາດໝາຍ** |
| --- | --- |
| • ອັດຕາເງິນເຟີ້ | ສະເລ່ຍບໍ່ເກີນ 5% |
| • ຮັບປະກັນຄັງສຳຮອງເປັນເງິນຕາຕ່າງປະເທດ | ໃຫ້ກຸ້ມການນຳເຂົ້າ >5 ເດືອນ |
| • ຄວບຄຸມປະລິມານເງິນ (M2) | ເພີ່ມຂຶ້ນ ບໍ່ເກີນ 25% |
| **ດ້ານຂາອອກ-ຂາເຂົ້າ** | **ຄາດໝາຍ** |
| • ການສົ່ງອອກ: | ປະມານ 5.015 ລ້ານໂດລາສະຫະລັດ |
| • ການນຳເຂົ້າ: | ປະມານ 4.978 ລ້ານໂດລາສະຫະລັດ |
| • ດຸນການຄ້າ: | ປະມານ 37 ລ້ານໂດລາສະຫະລັດ |

# ດ້ານເສດຖະກິດມະຫາພາກ

| ດຸນດ່ຽງແຮງງານ | ຄາດໝາຍ |
| --- | --- |
| • ຂົງເຂດກະສິກໍາ | ຫຼຸດລົງຈາກ 64,5% ເປັນ 64,3% |
| • ອຸດສາຫະກໍາ-ກໍ່ສ້າງ | ເພີ່ມຂຶ້ນ ຈາກ 11,8% ເປັນ 12% |
| • ບໍລິການ | ຢູ່ໃນລະດັບ 23,7% |
| • ຢູ່ໃນລະດັບ 23,7% | ຢູ່ໃນລະດັບ 23,7% |

# ຂົງເຂດການຜະລິດ

| | ຄາດໝາຍ |
| --- | --- |
| ຜະລິດເຂົ້າ | 4,2 ລ້ານໂຕນ |
| ການຜະລິດອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ | ບັນລຸ 9.614,90 ຕື້ກີບ. |
| ສູ້ຊົນມູນຄ່າຈໍລະຈອນສິນຄ້າ | ບັນລຸ 57.386 ຕື້ກີບ. |
| ຜະລິດແຮ່ທາດ | 10.974 ຕື້ກີບ. |
| ຜະລິດໄຟຟ້າ | 31.701 ລ້ານກິໂລວັດໂມງ. |
| ນັກທ່ອງທ່ຽວ | 5,2 ລ້ານເທື່ອຄົນ |
| ລາຍຮັບຈາກການທ່ອງທ່ຽວ | 900 ລ້ານໂດລາສະຫະລັດ |

# ດ້ານວັດທະນາທຳ-ສັງຄົມ

| **ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ** | **ຄາດໝາຍ** |
|---|---|
| + ຄອບຄົວທຸກຍາກ | ຫຼຸດລົງໃຫ້ໄດ້ 4.833 ຄອບຄົວ |
| + ສູ້ຊົນລຶບລ້າງບ້ານທຸກຍາກ | ໃຫ້ໄດ້ 220 ບ້ານ |
| **ດ້ານການສຶກສາ:** | **ຄາດໝາຍ** |
| + ອັດຕາການລອດເຫຼືອຂອງນັກຮຽນ ຮອດປໍ5 | ໃຫ້ບັນລຸ 84% |
| + ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນຕົ້ນ (ດັດສະນີໝາຍ LDC) | ໃຫ້ໄດ້ 83,5%. |
| + ເພີ່ມອັດຕາເຂົ້າຮຽນລວມຊັ້ນມັດທະຍົມຕອນປາຍ (ດັດສະນີໝາຍ LDC) | ໃຫ້ໄດ້ 54,3% |

# ດ້ານວັດທະນາທຳ-ສັງຄົມ

| ດ້ານສາທາລະນະສຸກ | ຄາດໝາຍ |
|---|---|
| + ອັດຕາການຕາຍຂອງເດັກນ້ອຍລຸ່ມ 1ປີ | 38/1000 (ຄາດໝາຍ SDG2030: 21/1000) |
| + ອັດຕາເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ | ຫຼຸດລົງຍັງເຫຼືອ 21% |
| + ອັດຕາເດັກນ້ອຍລຸ້ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ | ໃຫ້ຍັງເຫຼືອ 33,2% |
| + ອັດຕາການຕາຍຂອງແມ່ | 179/100.000 (ຄາດໝາຍ SDG ປີ 2030 ແມ່ນ 70/100.000) |
| + ອັດຕາການນຳໃຊ້ນ້ຳສະອາດ | 88% (ຄາດໝາຍ SDG ສູງກວ່າ 95%) |
| + ອັດຕາການຊົມໃຊ້ວິດຖ່າຍ | ໃຫ້ໄດ້ 73% (ຄາດໝາຍ SDG ຮອດປີ 2030 ແມ່ນ > 90%) |

# ບູລິມະສິດການຈັດສັນການລົງທຶນ ຈາກງົບປະມານ

| ທຶນພາຍໃນ 2800 ຕື້ກີບ | |
|---|---|
| 1. ໂຄງການໜີ້ສິນ | 40% |
| 2. ໂຄງການສືບຕໍ່ | 35% |
| 3. ໂຄງການສະເໜີໃໝ່ ແລະ ສົມທົບທຶນໂຄງການຊ່ວຍເຫຼືອຕ່າງປະເທດ | 25% |

**ຕົ້ນຕໍແມ່ນສຸມໃສ່ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການພັດທະນາຊັບພະຍາກອນມະນຸດ, ການພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ ແລະ ການຄົ້ນຄ້ວາ ແລະ ນໍາໃຊ້ວິທະຍາສາດເຕັດໂນໂລຊີ**

# ການປັບປຸງແວດລ້ອມການລົງທຶນ ຂອງພາກເອກກະຊົນ

- ການແກ້ໄຂໜີ້ສິນການກໍ່ສ້າງພື້ນຖານໂຄງລ່າງ
- ການເຂົ້າສູ່ຮອບວຽນຂອງພາກທະນາຄານ ແລະ ທຸລະກິດ
- ການອໍານວຍຄວາມສະດວກແກ່ພາກທຸລະກິດການຈັດຕັ້ງປະຕິບັດກົນໄກປະຕູດຽວ
- ການເຂົ້າເຖິງແຫລ່ງທຶນ ແລະ ການພັດທະນາSMEs
- ການສ້າງສີມືແຮງງານເພື່ອຮັບໃຊ້ FDI

# ການປັບປຸງການເງິນພາກລັດ

- ການນຳໃຊ້ລະບົບທັນສະໄໝເຂົ້າໃນການເກັບລາຍຮັບ
- ການເກັບກຳ ແລະ ສ້າງຖານຂໍ້ມູນກ່ຽວກັບຖານລາຍອັນ
- ການສ້າງແຜນລາຍຈ່າຍໄລຍະກາງ
- ການຕິດຕາມກວດກາ, ປະເມີນຜົນບັນດາໂຄງການ PIP
- ການຫັນເຂົ້າສູ່ວິໄນແຜນການ ແລະ ການເງິນ

# ນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດ

- ຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພໃນທົ່ວສັງຄົມ (ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ)
- ຕິດຕາມ ແລະ ຄຸ້ມຄອງເສດຖະກິດມະຫາພາກໃຫ້ໜັກແໜ້ນ: ຄຸ້ມຄອງອັດຕາເງິນເຟີ້, ອັດຕາແລກປ່ຽນ, ປະລິມານເງິນ M2 ໃຫ້ຢູ່ໃນລະດັບຄາດໝາຍທີ່ວາງໄວ້.
- ຕິດຕາມ ແລະ ຄຸ້ມຄອງອັດຕາແລກປ່ຽນໃຫ້ມີສະຖຽນລະພາບ, ມີຄວາມຢືດຍຸ່ນ ສົມຄູ່ກັບການຮັກສາສະຖຽນລະພາບຂອງອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງດີ ແລະ ຮັດກຸມ
- ຫັນເປັນທັນສະໄໝໃນການຄຸ້ມຄອງເກັບລາຍຮັບງົບປະມານ, ພາສີ-ອາກອນໃຫ້ໄດ້ຄົບຖ້ວນທົ່ວເຖິງ, ປະຕິບັດນະໂຍບາຍປະຢັດ ຕາມຄຳສັ່ງເລກທີ 09/ນຍ ຢ່າງເຂັ້ມງວດ
- ປັບປຸງສະພາບແວດລ້ອມ ແລະ ບັນຍາກາດຂອງການລົງທຶນ ໃຫ້ດີກວ່າເກົ່າ ແກ້ໄຂຂອດຂັ້ນທີ່ເປັນອຸປະສັກຕໍ່ການເຄື່ອນໄຫວເຮັດທຸລະກິດ.

# ນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດ

- ປະຕິບັດນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ເຂັ້ມແຂງ ແລະ ສາມາດແຂ່ງຂັນໄດ້
- ສຸມໃສ່ພັດທະນາຊົນນະບົດໃຫ້ທົ່ວເຖິງ ແລະ ເຂົ້າສູ່ລວງເລິກເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ເຮັດໃຫ້ອັດຕາຄວາມທຸກຍາກຂອງປະຊາຊົນຫຼຸດລົງເປັນກ້າວໆ
- ປະຕິບັດວິໄນແຜນການ-ການເງິນ, ກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ.
- ປະຕິບັດຕາມແຜນການ-ແຜນງານ ແລະ ກິດຈະກຳຂອງປີທ່ອງທ່ຽວແຫ່ງຊາດ 2018 ດ້ວຍການຮັບປະກັນໃຫ້ມີຄວາມສະຫງົບ-ຄວາມປອດໄພທີ່ດີ, ການບໍລິການທີ່ດີ ແລະ ການຕ້ອນຮັບທີ່ດີ ໃນທົ່ວສັງຄົມ,

# ຂໍຂອບໃຈ